**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 1146/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2024

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບລົງລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ກອງທຶນນ້ຳມັນເຊື້ອໄຟສະບັບເລກທີ 83/ລບ, ລົງວັນທີ 16 ມັງກອນ 2024.
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 16 ຕຸລາ 2024.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 160 ກີບ/ລິດ, ນ້ຳມັນແອັດຊັງທຳມະດາປັບລົງ 150 ກີບ/ລິດ ແລະ ນ້ຳມັນກາຊວນປັບລົງ 170 ກີບ/ລິດ.

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ: ຫົວໜ່ວຍ:ກີບ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 30,550 | 30,390 | (160) | 0.52 | |
| 2 | ອຊ ທຳມະດາ | 23,510 | 23,360 | (150) | 0.64 | |
| 3 | ກາຊວນ | 19,800 | 19,630 | (170) | 0.86 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດວັນທີ 17 ຕຸລາ 2024, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1145/ກຄພນ, ລົງວັນທີ 16 ຕຸລາ 2024 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນໍາຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ,ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນໍາໃຊ້ມາດຕະການຕ່າງໆ ຕາມ ລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1128/ກຄພນ, ລົງວັນທີ 09 ຕຸລາ 2024.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມການຄ້າພາຍໃນ

ສັນຕິສຸກ ພູນສະຫວັດ

**<u>ບ່ອນສົ່ງ:</u>**
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກໍາມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 17 ຕຸລາ 2024, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **30,390** | **23,360** | **19,630** |
| 2 | ແຂວງຜົ້ງສາລີ | **31,380** | **24,350** | **20,620** |
| 3 | ແຂວງຫຼວງນ້ຳທາ | **30,880** | **23,860** | **20,120** |
| 4 | ແຂວງອຸດົມໄຊ | **31,060** | **24,030** | **20,300** |
| 5 | ແຂວງບໍ່ແກ້ວ | **30,490** | **23,460** | **19,730** |
| 6 | ແຂວງຫຼວງພະບາງ | **30,900** | **23,870** | **20,140** |
| 7 | ແຂວງໄຊຍະບູລີ | **30,710** | **23,690** | **19,960** |
| 8 | ແຂວງຫົວພັນ | **30,880** | **23,870** | **20,140** |
| 9 | ແຂວງຊຽງຂວາງ | **30,580** | **23,550** | **19,820** |
| 10 | ແຂວງວຽງຈັນ | **30,390** | **23,360** | **19,630** |
| 11 | ແຂວງບໍລິຄຳໄຊ | **30,440** | **23,410** | **19,680** |
| 12 | ແຂວງຄຳມ່ວນ | **30,420** | **23,390** | **19,660** |
| 13 | ແຂວງສະຫວັນນະເຂດ | **30,420** | **23,390** | **19,660** |
| 14 | ແຂວງສາລະວັນ | **30,670** | **23,650** | **19,920** |
| 15 | ແຂວງຈຳປາສັກ | **30,450** | **23,420** | **19,690** |
| 16 | ແຂວງເຊກອງ | **30,670** | **23,650** | **19,920** |
| 17 | ແຂວງອັດຕະປື | **30,720** | **23,690** | **19,960** |
| 18 | ແຂວງໄຊສົມບູນ | **30,810** | **23,780** | **20,060** |

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2024

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ